ແຈ້ງການເລື່ອງການຮັບຟັງຄຳຄິດເຫັນຂອງສັງຄົມ ແລະ ການເປີດເຜີຍແຜນການສັງລວມຂອງລັດເທັນເນັສຊີປະຈຳປີ 2020-2024 ແລະ ແຜນດຳເນີນງານປະຈຳປີ 2020-2021 ສຳລັບໂຄງການພັດທະນາທີ່ຢູ່ອາໄສ ແລະ ຊຸມຊົນ

ໜ່ວຍງານພັດທະນາທີ່ຢູ່ອາໄສລັດເທັນເນັສຊີ (THDA) ໄດ້ສຳເລັດຮ່າງແຜນການສັງລວມຂອງລັດເທັນເນັສຊີປະຈຳປີ 2020-2024 ແລະ ແຜນດຳເນີນງານປະຈຳປີ 2020-2021 ສຳລັບໂຄງການພັດທະນາທີ່ຢູ່ອາໄສ ແລະ ຊຸມຊົນຢູ່ໃນລັດເທັນເນັສຊີ. ແຜນການສັງລວມຂອງລັດເທັນເນັສຊີປະຈຳປີ 2020-2024 ແລະ ແຜນດຳເນີນງານປະຈຳປີ 2020-2021 ລວມມີການວາງແຜນ, ການນຳໃຊ້ ແລະ ການລາຍງານສຳລັບໂຄງການຊ່ວຍເຫຼືອລ້າຂອງກະຊວງພັດທະນາທີ່ຢູ່ອາໄສ ແລະ ຕົວເມືອງ (HUD) ສະຫະລັດຫ້າໂຄງການຄື:

- ໂຄງການທຶນຊ່ວຍເຫຼືອອາຄານພັດທະນາຊຸມຊົນ (CDBG, ບໍລິຫານງານໂດຍພະແນກພັດທະນາເສດຖະກິດ ແລະ ຊຸມຊົນລັດເທັນເນັສຊີ)
- ໂຄງການຮຸ້ນສ່ວນການລົງທຶນ HOME (HOME, ບໍລິຫານງານໂດຍ THDA)
- ກອງທຶນເຊື່ອໝັ້ນທີ່ຢູ່ອາໄສ (HTF, ບໍລິຫານງານໂດຍ THDA)
- ໂຄງການທຶນຊ່ວຍເຫຼືອການແກ້ໄຂບັນຫາສຸກເສີນ (ESG, ບໍລິຫານງານໂດຍ THDA)
- ໂຄງການເປີດໂອກາດໃຫ້ຄົນທີ່ເປັນເອດສ໌ (AIDS) ມີທີ່ຢູ່ອາໄສ (HOPWA, ບໍລິຫານງານໂດຍພະແນກສາທາລະນະສຸກຂອງລັດເທັນເນັສຊີ)

ໂຄງການເຫຼົ່ານີ້ສະໜັບສະໜູນຄວາມພະຍາຍາມຕ່າງໆຂອງການພັດທະນາທີ່ຢູ່ອາໄສ ແລະ ຊຸມຊົນທົ່ວລັດເທັນເນັສຊີ ເພື່ອຜັນປະໂຫຍດຂອງຄອບຄົວທີ່ມີລາຍໄດ້ຕ່ຳ ແລະ ປານກາງ. ທາງລັດຖະກອງກຽມຮ້ອງໃຫ້ກະກຽມ ແລະ ສົ່ງແຜນສັງລວມໃຫ້ແກ່ HUD ທຸກໆຫ້າປີ. ແຜນການໃໝ່ນີ້ຈະສົ່ງໃຫ້ກັບທາງ HUD ໃນເດືອນພຶດສະພາ 2020.

ພົນລະເມືອງໄດ້ຮັບການສະໜັບສະໜູນໃຫ້ທົບທວນເບິ່ງ ແລະ ໃຫ້ຄຳຄິດເຫັນຕໍ່ຂໍ້ມູນທີ່ມີຢູ່ໃນບົດລາຍງານທີ່ມີຢູ່ທີ່ https://thda.org/about-thda/public-notice-and-comment ເລີ່ມຕົ້ນວັນທີ 4 ມີນາ 2020. ນອກນັ້ນຈະມີຮ່າງບົດສັງລວມທີ່ເປັນພາສາອັງກິດ ແລະ ພາສາສະເປນໃຫ້ນຳ. ຄຳຄິດເຫັນເປັນລາຍລັກອັກສອນຜ່ານການສົ່ງທາງອີເລັກໂທຣນິກໃນເວັບໄຊ THDA ຈະຮັບໄດ້ເລີ່ມຈາກວັນທີ 4 ມີນາ-20 ເມສາ 2020.

ໜ່ວຍງານພັດທະນາທີ່ຢູ່ອາໄສລັດເທັນເນັສຊີ (THDA) ແລະ ຄູ່ຮ່ວມງານກຳລັງເປັນເຈົ້າພາບຈັດກອງປະຊຸມສາທາລະນະໃນທົ່ວລັດເພື່ອນຳສະເໜີເນື້ອຫາຂອງແຜນການ ແລະ ຟັງຄຳຄິດເຫັນຂອງສັງຄົມ. ບົດນຳສະເໜີ ແລະ ເອກະສານແຜນສັງລວມກ່ອນຈະໂພສລົງໃນ https://thda.org/research-planning/consolidated-planning. ກອງປະຊຸມຕ່າງໆແມ່ນໄດ້ກຳນົດຕາຕະລາງເວລາດັ່ງລຸ່ມນີ້:

ວັນທີ ແລະ ເວລາ*	ເມືອງ	ສະຖານທີ່	ຕິດຕໍ່
26 ມີນາ 2020 4-6 ໂມງແລງ	ຊັດຕະນູກາ (Chattanooga)	ເຂດພັດທະນາລັດເທັນເນັນຊີທາງຕາເວັນອອກສຽງໃຕ້ (Southeast TN Development District) 1000 Riverfront Parkway Chattanooga, TN 37402	ຊັກ ຮາມ້ອນ (Chuck Hammonds) 423-266-5781

30 ມີນາ 2020 3:30-5:30 ໂມງແລງ	ຄຸກເກວິວ (Cookeville)	ເຂດພັດທະນາຄໍາເບີແລນຕອນເທິງ (Upper Cumberland Development District) 1104 England Drive Cookeville, TN 38501	ທອມມີ ລີ (Tommy Lee) 931-432-4111
31 ມີນາ 2020 3:30-5:30 ໂມງແລງ	ແຈັກສັນ (Jackson)	ເຂດພັດທະນາລັດເທັນເນັສຊີຕາເວັນຕົກສຽງໃຕ້ (Southwest TN Development District) 102 E. College St. Jackson, TN 38301	ໂທມັສ ສະເກຮານ (Thomas Skehan) 731-668-6429
1 ເມສາ 2020 9-11 ໂມງເຊົ້າ	ມາຕິນ (Martin)	ເຂດພັດທະນາລັດເທັນເນັສຊີຕາເວັນຕົກສຽງເໜືອ (Northwest TN Development District) 124 Weldon Drive Martin, TN 38237	ເຈັສຊິກາ ເບັກເກີ (Jessica Baker) 731-587-4213
1 ເມສາ 2020 3-5 ໂມງແລງ	ເມັມພິສ (Memphis)	ສະມາຄົມນັກທຸລະກິດຫຼັກຊັບເຂດເມັມພິສ (Memphis Area Association of Realtors) ສູນການສຶກສາ (Education Center) 6393 Poplar Ave Memphis, TN 38119	ໂພລ ມໍຣິສ (Paul Morris) 901-729-2871 (ເຈົ້າພາບໂດຍ MAAG)
7 ເມສາ 2020 11ໂມງເຊົ້າ - 1 ໂມງແລງ	ນາສວິລ (Nashville)	ສະພາເຂດນາສວິລໃຫຍ່ (Greater Nashville Regional Council) 220 Athens Way, Suite 200 Nashville, TN 37228	ແອງເจລາ ຮັບບາດ (Angela Hubbard) 615-880-3746
8 ເມສາ 2020 9-11 ໂມງເຊົ້າ	ເມົ້າພລີແຊ້ນ (Mt. Pleasant)	ເຂດພັດທະນາລັດເທັນເນັສຊີພາກກາງຕອນໃຕ້ (South Central TN Development District) 101 Sam Watkins Boulevard Mt. Pleasant, TN 38474	ເຕຍ ລັອກຣິດຈ์ (Tia Lockridge) 931-379-2929
9 ເມສາ 2020 10 ໂມງເຊົ້າ - ທ່ຽງ	ນັອກວິລ (Knoxville)	ຫ້ອງຊຸມຊົນສາລາກາງເມືອງຟາຣາກຸດ (Farragut Town Hall Community Room) 11408 Municipal Center Drive Knoxville, TN 37934	ເທີຣີ ບັອບໂຣສະກີ (Terry Bobrowski) 865-273-6003 (ເປັນເจົ້າພາບໂດຍ ETDD)
9 ເມສາ 2020 3-5 ໂມງແລງ	ເມືອງຈອນສັນ (Johnson City)	ເຂດພັດທະນາລັດເທັນເນັສຊີທີໜຶ່ງ (First Tennessee Development District) 3211 N. Roan Street Johnson City, TN 37601	ບິລ ຟໍເຣັສເຕີ (Bill Forrester) 423-928-0224

*ເວລາທັງໝົດເປັນເວລາທ້ອງຖິ່ນ.

ການຮອງຮັບພິເສດ (ຕົວຢ່າງ: ຄົນທີ່ຕ້ອງການຄວາມຊ່ວຍເຫຼືອເນື່ອງຈາກມີຄວາມພິການທາງດ້ານການຟັງ ຫຼື ສາຍຕາ ຫຼື ມີຄວາມຮູ້ພາສາອັງກິດຈຳກັດ) ຕ້ອງສະເໜີຂໍເປັນລາຍລັກອັກສອນກ່ອນການຮັບຟັງຄຳຄິດເຫັນສາທາລະນະ 15 ວັນດ້ວຍການສົ່ງເຖິງທ້າວ ມີການ ເວັບ (Megan Webb) ທີ່ research@thda.org.